# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ວັນທີ 1 ເດືອນພຶສພາ ໒005 ( 5 -1 - ໒005 )

---

## <u>ສແວງຫານ້ຳພຣະທັຍພຣະເຈົ້າ</u>

**<u>ຄວາມຈິງໃນພຣະຄັມພີ:</u>** ພຣະເຈົ້າໄດ້ຊົງເຮັດກິຈການຂອງພຣະອົງໃນການປ່ຽນແປງໃນຊີວິດຂອງໄພ່ພົນຂອງພຣະອົງເພື່ອເຂົາຈະໄດ້ນຳຈຸດປະສົງຂອງພຣະອົງໃຫ້ສະແດງອອກແທນ.
**<u>ຂໍ້ພຣະຄັມພີທີ່ສຳຄັນ:</u>** ປະຖົມມະການ : 1໒:1-7,10-18
**<u>ໃຊ້ໃນຊີວິດປະຈຳວັນ:</u>** ເພື່ອຊ່ວຍໃຫ້ທ່ານໄດ້ມີການຕອບສນອງທີ່ສລາດໃນການປ່ຽນແປງຕາມພຣະປະສົງແລະການຊົງສະຖິດຢູ່ນຳຂອງພຣະເຈົ້າ.

### ຂ້າພະເຈົ້າຄວນຈະຕອບສນອງຕໍ່ການປ່ຽນແປງໃນຊີວິດຂອງຂ້າພະເຈົ້າຢ່າງໃດ?

ຊີວິດອາດຈະເປັນເຣື່ອງນຶ່ງທີ່ມີການປ່ຽນແປງຢ່າງບໍ່ມີສິ້ນສຸດ. ມີການປ່ຽນແປງໃນວຽກງານທີ່ເຫັນວ່າຖາວອນແລ້ວ, ວິວັທນາການດ້ານເທັກນິກ, ສຸຂພາບ, ຄຸນຄ່າຂອງສັງຄົມ, ຄອບຄົວ, ການເມືອງພາກໃຫມ່, ແລະມະນຸດສຳພັນທີ່ມີການປ່ຽນແປງປະສົມໃສ່ໃນຊີວິດຂອງພວກເຮົາທຸກຄົນ. ມີບາງຢ່າງການປ່ຽນແປງໃຫມ່ນີ້ກໍຖືກຕ້ອນຮັບດ້ວຍຄວາມຍິນດີ, ແຕ່ບາງຢ່າງກໍບໍ່ເປັນດັ່ງນັ້ນ. ມີຫຼາຍຢ່າງທີ່ປ່ຽນແປງທີ່ສາມາດເປັນການຫມູນໃຈ. ພວກເຮົາເຄີຍມີປະຕິກິຣິຍາແນວໃດໃນການຕອບຮັບການປ່ຽນແປງ, ໂດຍສະເພາະແລ້ວຄືໃນສິ່ງທີ່ເຮົາບໍ່ຕ້ອງການໃຫ້ມີຂຶ້ນ, ເປັນຄຳສັ່ງທີ່ເຂັ້ມງວດ, ຫຼືການຂົ່ມຂູ່? ພວກເຮົາສາມາດຫາຄຳຕອບໄດ້ໃນຄຳຖາມຕ່າງໆ ຄືຕາມທິດທາງທີ່ອັບຣາຮາມໄດ້ຕອບສນອງຕໍ່ການປ່ຽນແປງໃນເວລານັ້ນ. ດັ່ງທີ່ທ່ານໄດ້ຮຽນມາແລ້ວ, ຈົ່ງພິຈາຣະນາເບິ່ງໃນ 3 ຂໍ້ທີ່ເພິ່ນໃຊ້ໃນການຕັດສິນໃຈຕໍ່ສິ່ງທີ່ເກີດຂຶ້ນ: (1) ເພິ່ນໄດ້ເບິ່ງໃນນ້ຳຂອງພຣະທັຍພຣະເຈົ້າ. (໒) ເພິ່ນມີຄວາມເຂົ້າໃຈໃນສິ່ງທີ່ພຣະເຈົ້າຊົງສະແດງໃຫ້ເຫັນ. (3) ເຖິງແມ່ນວ່າເພິ່ນຈະມີການເຮັດຜິດພາດເປັນບາງເວລາ ແຕ່ເພິ່ນກໍຊອກຫາການຊ່ວຍເຫຼືອຈາກພຣະເຈົ້າ. ຈົ່ງບອກເຣື່ອງລາວບາງຢ່າງວ່າພຣະເຈົ້າໄດ້ເວົ້າຢ່າງໃດກັບທ່ານໃນເວລາທີ່ຈະປະເຊີນຫນ້າ ກັບການປ່ຽນແປງໃນຊີວິດຂອງທ່ານ.

### 1. <u>ສແວງຫານ້ຳພຣະທັຍພຣະເຈົ້າ:</u> ( ປຖກ. 1໒ : 1- 3 )

ພວກເຮົາໃຊ້ຊີວິດຢູ່ໃນໂລກນີ້ຢ່າງສັ້ນໆ, ແຕ່ພຣະເຈົ້າເພື່ອທີ່ຈະໄດ້ຮັບຊີວິດອັນຕລອດໄປເປັນນິດ. ພຣະເຈົ້າໄດ້ຊົງປະທານໃຫ້ພວກເຮົາໄດ້ຮັບຢ່າງເຕັມບໍຣິບູນໃນຈຸດປະສົງຂອງພຣະອົງ. ເຖິງຢ່າງໃດກໍຕາມ,ພວກເຮົາທີ່ຖືວ່າເປັນຜູ້ທີ່ມີຄວາມເຊື່ອກໍມີໂອກາດທີ່ຈະຖືກທົດລອງໂດຍຢູ່ໃນລະຫວ່າງກາງຂອງຄຳສັ່ງຍ້ອນໃນຊີວິດປະຈຳວັນຂອງພວກເຮົາທີ່ຖືກຫຸ້ມຫໍ່ດ້ວຍຊະມາຊິກໃນຄອບຄົວ, ສັງຄົມຮອບຂ້າງ, ແລະປະເພນີ ທີ່ພວກເຮົາລືມໄປວ່າເຮົາມາເຖິງຈຸດນີ້ໄດ້ຢ່າງໃດ. ມີຫຼາຍຄົນໃນພວກເຮົາເຂົ້າໃຈຄິດເຖິງຈຸດປະສົງຂອງພວກເຮົາຄືການໃຊ້ຢ່າງຊົມຊື່ນຍິນດີໃນຜົນຂອງມັນ, ຄື ສຸຂພາບ, ຊີວິດທີ່ມີຄວາມອົບອຸ່ນ. ພວກເຮົາເຂົ້າໃຈຜິດໄປໃນການຕອບຮັບນັ້ນອາດຈະບໍ່ແມ່ນຈາກພຣະເຈົ້າ. ແຕ່ຍ້ອນວ່າພຣະເຈົ້າຊົງມີຄວາມຮັກແລະຕ້ອງການທີ່ຈະປະທານພຣະພອນໃຫ້ແກ່ພວກເຮົາ. ໃນທາງສ່ວນຕົວ, ເພາະພຣະອົງຊົງຕ້ອງການໃຫ້ເຮົາຮູ້ຈັກແລະປະຕິບັດຕາມພຣະອົງດັ່ງນັ້ນພຣະອົງຈຶ່ງຈະສາມາດເຮັດໃຫ້ຈຸດປະສົງທີ່ໄດ້ຊົງຕັ້ງໄວ້ແລ້ວຈະໄດ້ຊົງປະທານໃຫ້ ( ອຟຊ. ໒:10 ). ຈຸດປະສົງດັ່ງກ່າວນັ້ນອາດຈະເຮັດໃຫ້ພວກເຮົາບໍ່ໄດ້ຮັບເມື່ອເຖິງຈຸດນັ້ນ. ມີບາງຄັ້ງ, ການເຊື່ອຟັງພຣະເຈົ້າບາງທີກໍມີຂໍ້ຕໍ່ລອງແລະໂອກາດທີ່ຈະມີການປ່ຽນແປງແລະຂໍ້ສັນນິຖານອື່ນ.

ດ້ວຍພຣະຄຸນທີ່ໄດ້ສະແດງອອກໃນພຣະທັມພຣະນິມິດ, ພຣະເຈົ້າໄດ້ສະແດງໃຫ້ **ອັບຣາຮາມ** ໄດ້ເຫັນເຖິງນ້ຳພຣະທັຍທີ່ພຣະອົງມີ. (1) ພຣະເຈົ້າຈະປະທານພອນໃຫ້ອັບຣາຮາມກາຍເປັນ **ຊົນຊາດໃຫຍ່.** (2) ພຣະເຈົ້າຈະ **ອວຍພຣະພອນ** ໃຫ້ຈິດວິນຍານແລະຮ່າງກາຍຂອງລາວເຂັ້ມແຂງ. (3) ພຣະເຈົ້າຈະປະທານໃຫ້ **ລາວເປັນຜູ້ມີຊື່ສຽງໂດ່ງດັງ.** ຄົນທັງຫຼາຍຈະໄດ້ຮູ້ຈັກເພິ່ນບໍ່ວ່າ**ເຂົາຈະຢູ່ແຫ່ງໃດກໍຕາມ**ກໍຈະໄດ້ຮູ້ເຣື່ອງລາວແລະນັບຖືເພິ່ນ. (4) ແລະທີ່ສຳຄັນທີ່ສຸດຄື, ພຣະອົງຈະໄດ້ໃຊ້ເພິ່ນເປັນທໍ່ພຣະພອນໃຫ້ໄປສູ່ຄົນທັງຫຼາຍໃນໂລກໂດຍຜ່ານທາງເພິ່ນ. ໂດຍຜ່ານເຊື້ອສາຍຂອງອັບຣາຮາມ, ພຣະຜູ້ເປັນເຈົ້າຈະໄດ້ຊົງນຳຜູ້ຊ່ວຍ, ຄືພຣະເຢຊູຄຣິດເຈົ້າ, ມາສູ່ໂລກມະນຸດ. ພຣະເຈົ້າໄດ້ຈັດຕຽມໜົນທາງເພື່ອໄພ່ພົນຂອງພຣະອົງແລະທຸກໆ ຄົນແລະລີ້ນທຸກລີ້ນທີ່ຢູ່ໃນໂລກນີ້ຈະໄດ້ເຂົ້າມີສ່ວນໃນຊີວິດແລະມີຄວາມສຳພັນກັບພຣະເຈົ້າຜູ້ຍິ່ງໃຫຍ່. ໃນການມຸ້ງໄປສູ່ຂ້າງໜ້າໃນຄວາມເຊື່ອຂອງຂ້າພະເຈົ້າ, ພຣະເຈົ້າຊົງເປັນຜູ້ນຳພາຕາມນ້ຳພຣະທັຍຂອງພຣະອົງແລະເມື່ອເຖິງເວລານັ້ນກໍຈະມີແຕ່ຄວາມແຈ້ງໃສເໝືອນແກ້ວເຈັຍລະນັຍ. ແລະໃນເວລາອື່ນນັ້ນກໍຄົງຈະມືດເໝືອນຢູ່ໃນໝອກ. ແລະໃນທີ່ສຸດ, ໃນຂະນະທີ່ຂ້າພະເຈົ້າພະຍາຍາມທີ່ຈະເຊື່ອຟັງຕາມແສງທີ່ສ່ອງທາງທີ່ຂ້າພະເຈົ້າມີຢູ່, ແລະປ່ອຍໃຫ້ພຣະຄຳຂອງພຣະອົງໄດ້ເວົ້າກັບຂ້າພະເຈົ້າ, ແລະລໍຄອຍດ້ວຍການອະທິຖານ, ແລະເວລານັ້ນໝອກກໍຈະຈາງຫາຍໄປ. ຂ້າພະເຈົ້າຈະຕ້ອງໄດ້ສາລະພາບວ່າ, ມີຫຼາຍຄັ້ງທີ່ຂ້າພະເຈົ້າບໍ່ສົມຄວນອ້າງເຖິງຈຸດຂອງຄວາມຫຍຸ້ງຍາກມີຄວາມໝັ້ນໃຈນ້ອຍລົງແທນທີ່ຈະມີຄວາມຮັບຮູ້ແກ່ໃຈ. ແລ້ວທ່ານເດ?

## 2. <u>ມີຄວາມເຂົ້າໃຈເຖິ ງນ້ຳພຣະທັຍພຣະເຈົ້າທີ່ຊົງໄດ້ສະແດງອອກ:</u> (ປຖກ. 12 : 4-7)

ພຣະເຈົ້າໄດ້ເອີ້ນອັບຣາຮາມໃຫ້ເຂົ້າໄປໃນແຜ່ນດິນໃໝ່ໃນເວລາທີ່ອາຍຸເພິ່ນໄດ້ 75 ປີແລ້ວ. ຂ້າພະເຈົ້າມີຄວາມສົນໃຈວ່າອັບຣາຮາມມີຄວາມຄິດແນວໃດໃນໃຈເວລານັ້ນ. ເພິ່ນໄດ້ມີຄຳຖາມເຖິງເວລາແລະປັນຍາທີ່ຈະໃຊ້ໃນເວລາຍົກຍ້າຍນັ້ນບໍ່? ອັບຣາຮາມເປັນລູກຊາຍຄົນຜູ້ກົກຂອງຕະກູນແລະເພິ່ນກໍຈະໄດ້ກາຍເປັນຜູ້ສືບເຊື້ອສາຍຕໍ່ໄປ. ການທີ່ເຊື່ອຟັງພຣະເຈົ້າຄືການອົພຍົບຍົກຍ້າຍບ່ອນທີ່ເຄີຍທຳມາຫາກິນເປັນເວລາຫຼາຍປີແລະເປັນທີ່ລື້ງເຄີຍດີທັງວັທນະທັມແລະປະຊາຊົນທີ່ຢູ່ທີ່ນັ້ນ, ແລະທັງເປັນດິນແດນທີ່ທ່ານໄດ້ຮັບຜົນສຳເຣັດໃນການດຳຣົງຊີວິດແລ້ວ. ເພິ່ນໄດ້ຍົກຍ້າຍໄປຢູ່ໃນຖິ່ນຖານໃໝ່ທີ່ບໍ່ເຄີຍຮູ້ແລະບໍ່ເຄີຍເຫັນມາກ່ອນແລະທ່ານກໍຈະກາຍເປັນຄົນອື່ນທີ່ແປກໜ້າໄປ. ເພິ່ນຈະຕ້ອງໄດ້ຈາກຖິ່ນຖານທີ່ໝັ້ນຄົງແລ້ວ, ຊຶ່ງເພິ່ນເອງແລະຄົນທີ່ເພິ່ນຮັກຈະກາຍເປັນຜູ້ທີ່ເສັຽໄປ, ຈາກພີ່ນ້ອງ, ເພື່ອນຝູງທີ່ເຕີບໃຫຍ່ມາດ້ວຍກັນໂດຍທີ່ບໍ່ມີໃຜຫຼຽວແລສົນໃຈ. ທີ່ຈະຕອບການຮ້ອງຂອງພຣະເຈົ້າຕ້ອງມີສິ່ງຄ້ຳປະກັນແລະຕ້ອງໄດ້ຍອມຮັບການປ່ຽນແປງທີ່ຫຍຸ້ງຍາກໃນການດຳຣົງຊີວິດທີ່ຕ່າງອອກໄປ. ອັບຣາຮາມໄດ້ຮັບແລະປະຕິບັດຕາມນ້ຳພຣະທັຍພຣະເຈົ້າໃຫ້ເປັນທີ່ສົມບູນໂດຍສ່ຽງຕໍ່ການປ່ຽນແປງທຸກຢ່າງ, ດັ່ງນັ້ນເພິ່ນຈຶ່ງໄດ້ມ້ຽນເອົາສິ່ງຂອງແລະຄອບຄົວຂອງເພິ່ນອອກເດີນທາງໂດຍເດີນຕາມເສັ້ນທາງໄປສູ່ດິນແດນການາອານ. ໂລດ, ທີ່ເປັນລູກຊາຍຫຼາຂອງນ້ອງຊາຍອັບຣາຮາມເອງ, ໄດ້ຕຽມເອົາຄອບຄົວຂອງລາວເຂົ້າຮ່ວມຍົກຍ້າຍໄປກັບອັບຣາຮາມໃນຄັ້ງນີ້ດ້ວຍ. ມີພວກຄົນໃຊ້ແລະຝູງສັດລ້ຽງເປັນຈຳນວນຫຼວງຫຼາຍຈາກສອງຄອບຄົວນີ້ທີ່ເດີນທາງເປັນຂະບວນເຄື່ອນທີ່ໄປສູ່ຮາຣານ. ເມື່ອເຖິງຄານາອານ, ຮັບຣາຮາມກໍເດີນຜ່ານເຂດແດນມາເຖິງສະຖານທີ່ເມືອງເຊເຄມຄືທີ່ຕົ້ນກໍ່ຫຼວງໂມເຣ, ແລະທີ່ນີ້ເປັນດິນແດນທີ່ອຸດົມສົມບູນເພາະເປັນສູນໃຈກາງຂອງແຜ່ນດິນທີ່ໄດ້ຊົງສັນຍາໄວ້, ຊຶ່ງເປັນເຄິ່ງກາງລະຫວ່າງທະເລກາລີເລແລະທະເລຕາຍ, ແລະຢູ່ໃກ້ເຄິ່ງກາງລະຫວ່າງແມ່ນ້ຳຈໍແດນແລະທະເລມີດີເຕລານຽນ. ຮັບຣາຮາມກໍຮູ້ແລະເຂົ້າໃນດີວ່າດິນແດນແຫ່ງນີ້ແມ່ນປົກຄອງດ້ວຍພວກຄົນປ່າເຖື່ອນ. ຈົ່ງເບິ່ງຄຳແປ **ຊົນຊາດການາອານ** ໃນ (ຂໍ້ 13: 31-33), ທ່ານຄົງຈະເຂົ້າໃຈເຖິງການປົກຄອງຂອງພວກການາອານວ່າເຂົາຈະຂົ່ມເຫງແລະເຮັດຢ່າງໃດຕໍ່ຄົນແປກໜ້າຄືອັບຣາຮາມທີ່ຈະມາຍຶດ**ເອົາດິນແດນການາອານນີ້?** ເພິ່ນມີຄວາມກັງວົນບໍ່ໃນການຮຽກຮ້ອງແລະຄຳສັນຍາທີ່ພຣະເຈົ້າໃຫ້ໄວ້?

ຈະມີຫຼືບໍ່ກໍຕາມແຕ່ສິ່ງເຫຼົ່ານີ້ບໍ່ໄດ້ເປັນທີ່ລົບກວນອັບຣາຮາມ, ເພິ່ນຈະຊອກຫາຄວາມຊົມຊື່ນທີ່ມີຢູ່ໃນອົງພຣະຜູ້ເປັນເຈົ້າ. ໃນສະຖານທີ່ແລະເວລາດຽວກັນນັ້ນ, ພຣະເຈົ້າໄດ້ເວົ້າກັບອັບຣາຮາມອີກ. ພຣະອົງຊົງພໍພຣະທັຍຜູ້ຮັບໃຊ້ຂອງພຣະອົງຜູ້ນີ້ແລະຈະຊົງປະທານ " **ດິນແດນນີ້ເຮົາຈະຍົກໃຫ້ເຊື້ອສາຍຂອງເຈົ້າ** ". ອັບຣາຮາມໄດ້ສ້າງແທ່ນທີ່ນັ້ນຖວາຍບູຊາແກ່ພຣະເຈົ້າຜູ້ຊົງສຳແດງພຣະອົງໃຫ້ປາກົດແກ່ທ່ານ. ການທີ່ມີແທ່ນບູຊາສຳລັບຜູ້ທີ່ເຊື່ອຈະເປັນທີ່ນະມັສການເພື່ອເພີ້ມຄວາມຜ່ອງໃສຊົມຊື່ນຍິນດີໃນພຣະເຈົ້າ, ເພາະພຣະເຈົ້າອາດຈະບໍ່ໄດ້ເວົ້າກັບພວກເຮົາໂດຍກົງເໝືອນກັບອັບຣາຮາມໃນສມັຍນັ້ນ. ພຣະອົງຈະຊົງຕັດຜ່ານໃນເວລາທີ່ພວກເຮົານະມັສການໂດຍຜ່ານພຣະວິນຍານບໍຣິສຸດແລະໂດຍຜ່ານພຣະຄຳຂອງພຣະອົງ. ພວກເຮົາຜູ້ທີ່ຕັດສິນໃຈແລະໃຫ້ຄຳໝັ້ນສັນຍາທີ່ຈະມີຊີວິດເພື່ອພຣະຄຣິດດ້ວຍຄວາມເຊື່ອອາດຈະມີເວລານຶ່ງທີ່ເຮົາມີຄວາມຫວັງທີ່ຈະໄດ້ມີປະສົບປະການຍ້ອນພວກເຮົາໄດ້ຫ່າງໄກຈາກພຣະອົງ. ເຮົາຮູ້ວ່າ " ໄດ້ດຳຣົງຊີວິດດ້ວຍຄວາມເຊື່ອບໍ່ແມ່ນດ້ວຍເຫັນໝາຍສຳຄັນ " ( 2 ກລທ. 5: 7 ). ແລະໃນທີ່ສຸດ, ໃນເມື່ອການເຊື່ອຟັງຕິດຕາມບໍ່ໄດ້ນຳຜົນມາໃຫ້ພວກເຮົາໄດ້ເຫັນກໍອາດຈະມີການຂັດເຄືອງໃຈແຕ່ຈົ່ງອ່ອນນ້ອມກັບພຣະເຈົ້າໃຫ້ພຣະອົງເປັນຜູ້ຊົງນຳພາແລະສຳແດງພຣະອົງໃຫ້ເຮົາຮູ້. ພວກເຮົາຄວນເອົາຕົວຢ່າງຂອງອັບຣາຮາມແລະບັນຫາທີ່ເພິ່ນໄດ້ພົບພໍ້ແລະພຣະເຈົ້າກໍໄດ້ຊົງສະຖິດຢູ່ໃກ້ງເພິ່ນ.

| |
|---|
| ເມື່ອຊີວິດຄຣິສຕຽນແລະການຮັບໃຊ້ຂອງທ່ານບໍ່ເປັນໄປຕາມທີ່ຄາດຫວັງໄວ້ທ່ານເຮັດແນວໃດ ທ່ານກ່າວໂທດໃສ່ພຣະເຈົ້າ ຫລືວ່າທ່ານສແວງຫາພຣະອົງ? |

**3. <u>ສແວງຫາການຊ່ວຍເຫຼືອຂອງພຣະເຈົ້າ:</u>** ( ປຖກ. 12 : 10 - 18 )

ເພື່ອນຂອງອາຈານຜູ້ນຶ່ງໄດ້ຍອມຮັບເອົາການຮຽກເອີ້ນຂອງພຣະເຈົ້າໄປຮັບໃຊ້ຢູ່ໂບດແຫ່ງນຶ່ງທີ່ຢູ່ຕ່າງເມືອງແລະຮັບເງິນເດືອນພຽງເລັກນ້ອຍເພາະໃນຂະນະທີ່ເສຖກິດກຳລັງຕົກຕ່ຳ. ໃນລະຍະ 18 ເດືອນຕໍ່ມາບ້ານຂອງເພິ່ນກໍຖືກປະກາດຂາຍປະມູນຍ້ອນຄ່າຄອງຊີບຝືດເຄືອງການຄ້າຕົກຕ່ຳ. ອາດຈະມີຄຳຖາມກັບພຣະເຈົ້າວ່າເປັນຫຍັງພຣະອົງຈຶ່ງປະໃຫ້ເຫດການເຫຼົ່ານີ້ເກີດຂຶ້ນກັບຜູ້ຮັບໃຊ້ຂອງພຣະອົງ, ຄຳຕອບທີ່ຈະໄດ້ຮັບກໍຄົງຈະໃນທຳນອງນີ້ " ພວກເຮົາມີຊີວິດຢູ່ໃນໂລກນີ້ທີ່ມີຄວາມເຈັບປ່ວຍ, ອຸບັດຕິເຫດ, ລົມພາຍຸ, ຄວາມສັບສົນ, ສູນເສັຍວຽກງານ, ແລະເສຖກິດການຄ້າຕົກຕ່ຳທີ່ກຳລັງເກີດຂຶ້ນ. ສິ່ງທັງໝົດນີ້ເປັນພາກສ່ວນໃນການດຳຣົງຊີວິດຢູ່ໃນໂລກນີ້ຢູ່ແລ້ວ. ຄອບຄົວຂອງຂ້າພະເຈົ້າແລະຕົວເອງແມ່ນໄດ້ຊອກຫາການຊ່ວຍເຫຼືອຂອງພຣະເຈົ້າ ແລະມີຄວາມເຊື່ອແລະໄວ້ວາງໃຈວ່າພຣະອົງຈະຊົງເຫັນທຸກສິ່ງ, ແຕ່ນັ້ນບໍ່ໄດ້ໝາຍຄວາມວ່າເຮົາຈະບໍ່ໄດ້ພົບກັບຄວາມຫຍຸ້ງຍາກໃນຊີວິດເລີຍ." ອັບຣາຮາມໄດ້ພົບກັບການປ່ຽນແປງໃນຂະນະທີ່ອອກຈາກຮາຣານໄປ ແລະເດີນທາງເຂົ້າໄປໃນການາອານດ້ວຍການຊົງນຳຂອງພຣະເຈົ້າ. ການເດີນທາງດ້ວຍຄວາມເຊື່ອບໍ່ແມ່ນຈະສິ້ນສຸດເມື່ອຮອດດິນແດນການາອານເທົ່ານັ້ນ, ແຕ່ຫາກໍເລີ້ມຕົ້ນ. ເພິ່ນແລະໂລດໄດ້ນຳເອົາຝູງສັດລ້ຽງ, ຄົນໃຊ້ແລະຄົນລ້ຽງສັດຕິດຕາມມາເປັນຈຳນວນຫຼວງຫຼາຍ, ແລະແນ່ນອນຝູງສັດລ້ຽງເຫຼົ່ານັ້ນກໍອອກລູກແລະເພີ້ມທະວີຈຳນວນຂຶ້ນຢ່າງຫຼວງຫຼາຍຍ້ອນການມີອາຫານແລະນ້ຳໃນດິນແດນທີ່ອຸດົມສົມບູນ. ແລະຕໍ່ມາເກີດພັຍແຫ້ງແລ້ງ, ທົ່ງຫຍ້າທີ່ເຄີຍຂຽວງາມກໍກາຍເປັນເຫຼືອງແຫ້ງຕາຍແລະອີກຄັ້ງນຶ່ງທີ່ອັບຣາຮາມໄດ້ພົບກັບບັນຫາການປ່ຽນແປງຍ້ອນພັຍທັມມະຊາດທີ່ເກີດຂຶ້ນໃນຄັ້ງນີ້. ອັບຣາຮາມອາດຈະຖືກທົດລອງຄືໃຫ້ຢາກກັບຄືນໄປດິນແດນຮາຣານທີ່ອຸດົມສົມບູນ, ແຕ່ເພິ່ນກໍຍັງຄົງເກັບຮັກສາຄວາມເຊື່ອໃນຄຳສັນຍາຂອງພຣະເຈົ້າ. ແທນທີ່ຈະເດີນທາງຂຶ້ນໄປທາງທິດເໜືອແລະທາງຕາເວັນອອກ, ແຕ່ຍັງຄົງເດີນທາງລົງໄປທາງໃຕ້ແລະທາງທິດຕາເວັນຕົກຄືມຸ້ງໜ້າໄປສູ່ອີຢິບແລະລໍຄອຍຄວາມແຫ້ງແລ້ງຢູ່ທີ່ນັ້ນ. ພວກເຮົາບໍ່ໄດ້ເຫັນມີການບັນທຶກໄວ້ວ່າອັບຣາຮາມໄດ້ຮ້ອງຂໍຕໍ່ພຣະເຈົ້າຕໍ່ພັຍແຫ້ງແລ້ງທີ່ໄດ້ຮັບຫຼືເຣື່ອງການສ້າງບ່ອນນະມັສການພຣະເຈົ້າ ເມື່ອເພິ່ນພ້ອມຄອບຄົວໄດ້ເດີນທາງໄປເຖິງປະເທດອີຢິບແລ້ວ. ສິ່ງນີ້ອາດຈະແມ່ນອັບຣາຮາມໄດ້ສະແດງຄວາມເຫັນແກ່ຕົວຄືການທີ່ຈະຮັກສາສັດລ້ຽງແລະລ້ຽງດູຄົນຮັບໃຊ້ຂອງເພິ່ນເອງ. ມັນສະແດງອອກມາເຖິງການກະທຳຄືການວາງແຜນແລະມີການຊຸກຍູ້ໃນ

ເຣື່ອງນາງຊາຣາແມ່ນຄວາມຄິດຂອງເພິ່ນເອງ. ໃນຂະນະທີ່ເພິ່ນມີຄວາມກັງວົນໃນເຣື່ອງເນັ້ຣທີ່ງົດງາມຂອງຂອງເພິ່ນແລະຄິດວ່າເປັນຜູ້ທີ່ສລາດ, ການເຮັດເຊັ່ນນັ້ນແມ່ນບໍ່ມີຄວາມສັດຊື່ຕໍ່ພຣະຜູ້ເປັນເຈົ້າ. ເພາະການເຮັດຢ່າງນັ້ນແມ່ນການເປີດໂອກາດໃຫ້ນາງຊາຣາຖືກຈັບໄປເປັນນາງບໍາເລີຂອງກະສັດຟາຣາໂອ. ເພື່ອກະສັດຟາຣາໂອຈະໄດ້ພໍພຣະທັຍແລະຈະເຮັດດີຕອບແທນອັບຣາຮາມ, ແຕ່ພຣະເຈົ້າໄດ້ຊົງສໍາແດງໃຫ້ຜູ້ຮັກສາການຂອງກະສັດຟາຣາໂອໄດ້ຮູ້. ແລະໄດ້ສໍາແດງໃຫ້ອັບຣາຮາມຮູ້ວ່າການເຮັດເຊັ່ນນີ້ເປັນການເຮັດຜິດຄືບໍ່ມີຄວາມສັດຈິງຢູ່ໃນຕົວເອງ. ພຣະເຈົ້າຊົງມີພຣະຄຸນອັນຍິ່ງໃຫຍ່ໃນການທີ່ຈະຊ່ວຍເຫຼືອພວກເຮົາ, ເຖິງແມ້ວ່າເຮົາເລືອກທີ່ຈະເອົາຜົນຮັບທີ່ຂົມຂື່ນຍ້ອນຄວາມຜິດພາດຂອງຕົນເອງ. ພຣະເຈົ້າຊົງໄດ້ປົດປ່ອຍອັບຣາຮາມແລະນາງຊາຣາ, ໂດຍໄດ້ຮັບຄວາມອັບອາຍໃນຄວາມເປັນມະນຸດແລະຕົກຢູ່ໃນມືຂອງຄົນປ່າເຖື່ອນທີ່ໄດ້ສະແດງໃຫ້ເຫັນວ່າເຂົາກໍມີຄວາມຍຸຕິທັມກວ່າ. ນໍ້າພຣະທັຍຂອງພຣະເຈົ້າ ຄືຈະຕ້ອງໄດ້ນໍາເອົາພື້ນຖານການວັດແທກຂອງພຣະອົງອອກໄປເຜີຍແຜ່. ຄືພຣະອົງຊົງເປັນຄວາມຈິງ, ຄວາມຍຸຕິທັມ, ດີທີ່ສຸດ, ເມດຕາ, ແລະມີພຣະກະຣຸນາຄຸນ. ຜູ້ໃດຫາກຊອກຫາແລະຕິດຕາມພຣະອົງແລະເຮັດໃຫ້ທຸກສິ່ງນັ້ນເກີດຜົນສົມບູນກໍຈະກາຍເປັນຜູ້ຊອບທັມຕາມນໍ້າພຣະທັຍຂອງພຣະເຈົ້າ. ພວກເຮົາທັງຫມົດໄດ້ເຮັດຜິດພາດມາຕລອດຍ້ອນຄວາມເປັນມະນຸດທັມມະດາ, ດ້ວຍການຮູ້ແລະເຂົ້າໃຈວ່າ ແມ່ນຜູ້ໃດຄວນຈະເປັນຜູ້ນໍາພາໃນຊີວິດຂອງພວກເຮົາກໍຈະເຮັດໃຫ້ພວກເຮົາຊອກຫາພຣະເຈົ້າເພື່ອການຊ່ວຍເຫຼືອ ຄືໃຫ້ເປັນໄປຕາມນໍ້າພຣະທັຍຂອງພຣະອົງ ວ່າຈະໃຫ້ເປັນຫຍັງ, ເຮັດຫຍັງ. ຂໍຂອບພຣະຄຸນທີ່ພຣະອົງບໍ່ໄດ້ຊົງປະຖິ້ມໃຫ້ພວກເຮົາຢູ່ຫ່າງໄກໄປກວ່າຫົວເຂົ່າໄປເຖິງພື້ນ.

> ທ່ານຄິດແນວໃດ ກັບຄໍາຕອບຂອງສິດຍາພິບານຕາມເຣື່ອງຂ້າງເທິງນີ້? ທ່ານຄິດວ່າໄພ່ພົນຂອງພຣະເຈົ້າບໍ່ຄວນໄດ້ຮັບຄວາມຍາກລໍາບາກເຫມືອນກັບຄົນອື່ນໆ ແມ່ນບໍ່? ໃນຍາມປະສົບກັບຄວາມຍາກລໍາບາກທ່ານໄດ້ຮັບການຊ່ວຍເຫລືອຈາກພຣະເຈົ້າແນວໃດແດ່?

## ການຊ່ວຍເຫຼືອຂອງພຣະເຈົ້າບໍ່ໄດ້ຢູ່ໄກກໍຄືລະຫວ່າງຫົວເຂົ່າຫາພື້ນເທົ່ານັ້ນ:

ການທີ່ໄດ້ມີປະສົບການກັບການປ່ຽນແປງດ້ວຍຄວາມເຊື່ອເປັນສິ່ງນຶ່ງທີ່ຫນູນໃນໃຫ້ພວກເຮົາຕິດຕາມພຣະຜູ້ເປັນເຈົ້າ. ບົດຮຽນຈາກອັບຣາຮາມເຮົາໄດ້ຮຽນຮູ້ດັ່ງນີ້:

- ມີການຕອບຮັບຕໍ່ການທ້າທາຍໃນການປ່ຽນແປງໃຫ້ຊອກຫານໍ້າພຣະທັຍພຣະເຈົ້າແລະຮຽນຮູ້ຫາທາງທີ່ພຣະເຈົ້າຊົງໃຊ້ການປ່ຽນແປງເພື່ອອວຍພຣະພອນໃຫ້ແກ່ຜູ້ອື່ນແລະຕົວເຮົາເອງ.

- ປະເຊີນຫນ້າກັບການປ່ຽນແປງດ້ວຍຄວາມຫມັ້ນໃຈແລະດ້ວຍການຮັບຮູ້ວ່າພຣະເຈົ້າໄດ້ຊົງສະຖິດຢູ່ກັບເຮົາຕລອດເວລາ.

- ມີຄວາມເຊື່ອແລະຫມັ້ນໃຈທີ່ຈະຊອກຫາການຊ່ວຍເຫຼືອຈາກພຣະເຈົ້າເມື່ອປະເຊີນກັບການປ່ຽນແປງແລະມີເຫດການຂົມຂູ່ເກີດຂື້ນໃນທຸກສະຖານະການ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org